ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ: 3708 /ກງ
ນະຄອນຫຼວງວຽງຈັນ, ວັນທີ: 16 ກັນຍາ 2019

# ຄໍາແນະນໍາ
## ວ່າດ້ວຍ ການຄຸ້ມຄອງການສົ່ງອອກ-ນໍາເຂົ້າ ສິນຄ້າ,ເຄື່ອງຂອງ ຜ່ານ ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບ ເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 558/ລບ ລົງວັນທີ 31 ທັນວາ 2018 ວ່າດ້ວຍດ່ານຊາຍແດນ ແລະ ດ່ານສະໜາມບິນສາກົນ;
- ອີງຕາມ ບົດລາຍງານຂອງກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0130/ກປ, ລົງວັນທີ 14 ກຸມພາ 2019 ແລະ ບົດລາຍງານຂອງກະຊວງອຸດສະຫະກໍາ ແລະ ການຄ້າ ສະບັບເລກທີ 0194/ອຄ.ກຂອ, ລົງວັນທີ 27 ກຸມພາ 2019;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະນໍາກະຊວງການເງິນ;
- ອີງຕາມ ການສະເໜີ ຂອງ ກົມພາສີ ສະບັບເລກທີ 06651/ກພສ, ລົງວັນທີ 22 ສິງຫາ 2019.

ເພື່ອຮັບປະກັນການຈັດຕັ້ງປະຕິບັດ, ການຄຸ້ມຄອງສິນຄ້າ,ເຄື່ອງຂອງ ທີ່ສົ່ງອອກ-ນໍາເຂົ້າຜ່ານ ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ ໃຫ້ຖືກຕ້ອງຕາມກົດໝາຍແລະລະບຽບການທີ່ກ່ຽວຂ້ອງ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

## ກະຊວງການເງິນ ອອກຄໍາແນະນໍາ:

### 1. ຈຸດປະສົງ.

ຄໍາແນະນໍາສະບັບນີ້ວາງອອກເພື່ອກໍານົດຫຼັກການ, ວິທີການຄຸ້ມຄອງການສົ່ງອອກ-ນໍາເຂົ້າ ສິນຄ້າ,ເຄື່ອງຂອງ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເປັນຕົ້ນ ລະບຽບການດ້ານສຸຂານາໄມພືດ-ສັດ, ສິ່ງແວດລ້ອມ, ການຄຸ້ມຄອງການຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດ.

### 2. ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ.

#### 2.1. ດ່ານຊາຍແດນທ້ອງຖິ່ນ.

ດ່ານຊາຍແດນທ້ອງຖິ່ນ ຂອງ ສປປ ລາວ ມີ: ດ່ານຊາຍແດນທາງບົກ ແລະ ທາງນໍ້າ.

ດ່ານຊາຍແດນທ້ອງຖິ່ນ ແມ່ນສະຖານທີ່ທີ່ອະນຸຍາດໃຫ້ສະເພາະ ພົນລະເມືອງລາວ ແລະ ພົນລະເມືອງຂອງປະເທດໃກ້ຄຽງ ທີ່ມີພູມລໍາເນົາຖາວອນຢູ່ບໍລິເວນຊາຍແດນຂອງແຂວງທີ່ເຊື່ອມໜ້າ ສາມາດເດີນທາງເຂົ້າ-ອອກຕາມການຕົກລົງຢ່າງເປັນທາງການຂອງທັງສອງຝ່າຍ.

ສິນຄ້າ,ເຄື່ອງຂອງ ທີ່ອະນຸຍາດໃຫ້ນຳເຂົ້າ-ສົ່ງອອກຜ່ານ ດ່ານຊາຍແດນທ້ອງຖິ່ນ ແມ່ນປະເພດສິນຄ້ານຳໃຊ້ເພື່ອການບໍລິໂພກ ແລະ ຮັບໃຊ້ການຜະລິດຂອງປະຊາຊົນທ້ອງຖິ່ນຂອບເຂດສອງແຂວງທີ່ດ່ານຊາຍແດນຕັ້ງຢູ່ (ປະຕິບັດຕາມແຈ້ງການຂອງກະຊວງການເງິນທີ່ກຳນົດໄວ້ແຕ່ລະໄລຍະ).

**2.2. ດ່ານຊາຍແດນປະເພນີ.**

ດ່ານຊາຍແດນປະເພນີ ຂອງ ສປປ ລາວ ມີ: ດ່ານຊາຍແດນທາງບົກ ແລະ ທາງນ້ຳ.

ດ່ານຊາຍແດນປະເພນີ ແມ່ນດ່ານທີ່ອະນຸຍາດໃຫ້ສະເພາະ ພົນລະເມືອງລາວ ແລະ ພົນລະເມືອງຂອງປະເທດໃກ້ຄຽງ ທີ່ມີພູມລຳເນົາຖາວອນຢູ່ບໍລິເວນຊາຍແດນຂອງເມືອງທີ່ເຊື່ອມໜ້າ ສາມາດເດີນທາງເຂົ້າ-ອອກ ຕາມການຕົກລົງຢ່າງເປັນທາງການຂອງທັງສອງຝ່າຍ.

ສິນຄ້າ,ເຄື່ອງຂອງ ທີ່ອະນຸຍາດໃຫ້ນຳເຂົ້າ-ສົ່ງອອກຜ່ານ ດ່ານຊາຍແດນປະເພນີ ແມ່ນປະເພດສິນຄ້າທີ່ນຳໃຊ້ເພື່ອການບໍລິໂພກ ແລະ ຮັບໃຊ້ການຜະລິດຂອງປະຊາຊົນໃນທ້ອງຖິ່ນ ພາຍໃນຂອບເຂດສອງເມືອງທີ່ດ່ານຊາຍແດນຕັ້ງຢູ່ (ປະຕິບັດຕາມແຈ້ງການຂອງກະຊວງການເງິນທີ່ກຳນົດໄວ້ແຕ່ລະໄລຍະ).

**3. ການກຳນົດປະເພດສິນຄ້າ,ເຄື່ອງຂອງ ສົ່ງອອກ-ນຳເຂົ້າ ຜ່ານດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ.**

ກ. ລາຍການສິນຄ້າ,ເຄື່ອງຂອງ ທີ່ອະນຸຍາດໃຫ້ສົ່ງອອກ:

1) ສິນຄ້າ, ເຄື່ອງຂອງປະເພດ ກະສິກຳ, ຫັດຖະກຳ ທີ່ໄດ້ຈາກການປູກ ແລະ ການຜະລິດຂອງປະຊາຊົນ.

2) ສິນຄ້າ, ເຄື່ອງຂອງປະເພດອື່ນ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ (1) ຂ້າງເທິງ ຈະຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

3) ການສົ່ງອອກສິນຄ້າປະເພດແຮ່ທາດ, ສິນຄ້າ,ເຄື່ອງຂອງທີ່ມີຄວາມສ່ຽງ ຈະຕ້ອງໄດ້ຮັບການອະນຸມັດຈາກຂະແໜງການທີ່ກ່ຽວຂ້ອງ ແລະ ກະຊວງການເງິນ.

ຂ. ລາຍການສິນຄ້າ,ເຄື່ອງຂອງ ທີ່ໄດ້ຮັບອະນຸຍາດນຳເຂົ້າ:

1) ສິນຄ້າ,ເຄື່ອງຂອງອຸປະໂພກ-ບໍລິໂພກ ສຳລັບຮັບໃຊ້ໃນຄົວເຮືອນຂອງປະຊາຊົນ (ທີ່ບໍ່ເປັນລັກສະນະການຄ້າ).

2) ເຄື່ອງມື ແລະ ກົນຈັກຮັບໃຊ້ການຜະລິດກະສິກຳ:

| | |
|---|---|
| - ລົດໄຖນາເດີນຕາມ | 01 ຄັນ ຕໍ່ 01 ຄອບຄົວ. |
| - ຈັກສູບນ້ຳ | 01 ເຄື່ອງ ຕໍ່ 01 ຄອບຄົວ. |
| - ຈັກຟາດເຂົ້າ | 01 ເຄື່ອງ ຕໍ່ 01 ຄອບຄົວ. |
| - ໂຮງສີເຂົ້ານ້ອຍ | 01 ເຄື່ອງ ຕໍ່ 01 ຄອບຄົວ. |
| - ເຄື່ອງບົດອາຫານສັດ | 01 ເຄື່ອງ ຕໍ່ 01 ຄອບຄົວ. |
| - ອຸປະກອນປ້ອງກັນພືດ (ບົ້ງສີດ, ກັບດັກສັດຕູພືດ, ສາຍຢາງສຳລັບພົ່ນຢາປາບສັດຕູພືດ) | 03 ຊຸດ ຕໍ່ 01 ຄອບຄົວ. |

3) ສິນຄ້າກະສິກຳກ່ຽວກັບພືດ ແລະ ຜະລິດຕະພັນພືດ:

| | |
|---|---|
| - ແນວພັນສາລີ | 10 ກິໂລ ຕໍ່ຄົນ ຕໍ່ວັນ. |
| - ແນວພັນພືດຜັກ | 200 ກຣາມ ຕໍ່ຄົນ ຕໍ່ວັນ. |
| - ແນວພັນຕະກູນຖົ່ວ | 05 ກິໂລ ຕໍ່ຄົນ ຕໍ່ວັນ. |
| - ເບ້ຍໄມ້ໃຫ້ໝາກ, ເບ້ຍໄມ້ປະດັບ, ເບ້ຍໄມ້ອຸດສາຫະກຳ | 10 ເບ້ຍ ຕໍ່ຄົນ ຕໍ່ວັນ. |
| - ເຊື້ອເຫັດ | 10 ແກ້ວ ຕໍ່ຄົນ ຕໍ່ວັນ. |
| - ໝາກໄມ້ສົດລວມ | 10 ກິໂລ ຕໍ່ຄົນ ຕໍ່ວັນ. |
| - ພືດຜັກສົດລວມ (ກິນໃບ, ຫົວ, ໝາກ) | 05 ກິໂລ ຕໍ່ຄົນ ຕໍ່ວັນ. |
| - ດອກໄມ້ | 05 ກິໂລ ຕໍ່ຄົນ ຕໍ່ວັນ. |

- ພືດສະໝຸນໄພ ແລະ ເປັນຢາ 05 ກິໂລ ຕໍ່ຄົນ ຕໍ່ວັນ.
- ເຫັດສົດ 05 ກິໂລ ຕໍ່ຄົນ ຕໍ່ວັນ.
- ຝຸ່ນອິງຄະທາດ 02 ສອບ (ເປົາ) ຕໍ່ຄົນ ຕໍ່ວັນ.
- ຝຸ່ນວິທະຍາສາດ ຫຼື ຝຸ່ນເຄມີ 02 ສອບ (ເປົາ) ຕໍ່ຄົນ ຕໍ່ວັນ.
- ຢາປາບສັດຕູພືດຊີວະພາບ (ເຊື້ອຊີວະວິທະຍາ ແລະ ສານສະກັດຈາກພືດຕ່າງໆ): ປະລິມານ ບໍ່ໃຫ້ເກີນ ຊະນິດນ້ຳ 01 ລິດ ຫຼື ຊະນິດຝຸ່ນ 300 ກຣາມ ຕໍ່ຄົນ ຕໍ່ວັນ.

4) ສິນຄ້າກະສິກຳກ່ຽວກັບ ສັດ ແລະ ປະມົງ:
- ອາຫານສັດສຳເລັດຮູບ 30 ກິໂລ ຕໍ່ຄົນ ຕໍ່ອາທິດ;
- ອາຫານທະເລສົດ 03 ກິໂລ ຕໍ່ຄົນ ຕໍ່ອາທິດ;
- ອາຫານທະເລແຫ້ງ 02 ກິໂລ ຕໍ່ຄົນ ຕໍ່ອາທິດ;
- ແກ່ນຫຍ້າອາຫານສັດ 15 ກິໂລ ຕໍ່ຄົນ ຕໍ່ຄັ້ງ;
- ລູກປາທີ່ມີຄວາມຍາວ 3-5 ຊັງຕີແມັດ 500 ໂຕ ຕໍ່ຄົນ ຕໍ່ອາທິດ;
- ເຄື່ອງມືສຳລັບລ້ຽງສັດນ້ຳ ແລະ ສັດບົກ ທີ່ບໍ່ມີລັກສະນະການຄ້າ.

**4. ນະໂຍບາຍທາງດ້ານພາສີ-ອາກອນ.**

ການສົ່ງອອກ-ນຳເຂົ້າສິນຄ້າ,ເຄື່ອງຂອງ ທີ່ມີມູນຄ່າບໍ່ເກີນ 50 (ຫ້າສິບ) ໂດລາສະຫະລັດ ຈະໄດ້ຮັບການຍົກເວັ້ນ ພາສີ-ອາກອນ ຕາມມາດຕາ 19 ການຍົກເວັ້ນພາສີ-ອາກອນ ແລະ ພັນທະອື່ນທົ່ວໄປ ໃນບົດແນະນຳກະຊວງການເງິນ ສະບັບເລກທີ 1559/ກງ, ລົງວັນທີ 24 ພຶດສະພາ 2016 ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ສະບັບ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.

ກໍລະນີການສົ່ງອອກ-ນຳເຂົ້າສິນຄ້າ,ເຄື່ອງຂອງ ຫາກມີລັກສະນະການຄ້າ, ມີມູນຄ່າສູງ, ຈຳນວນຫຼາຍ ຫຼື ເກີນ ຈຳນວນທີ່ໄດ້ກຳນົດໄວ້ໃນຂໍ້ 3(ຂ) ຂ້າງເທິງ, ສິນຄ້າ,ເຄື່ອງຂອງດັ່ງກ່າວ ຈະຕ້ອງສົ່ງອອກ-ນຳເຂົ້າຜ່ານດ່ານຊາຍແດນ ສາກົນ. ເວັ້ນເສຍແຕ່ຜູ້ສົ່ງອອກ-ນຳເຂົ້າສິນຄ້າ,ເຄື່ອງຂອງດັ່ງກ່າວ ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ ຫຼື ໄດ້ ຂຶ້ນທະບຽນຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ.

**5. ຂັ້ນຕອນການຄຸ້ມຄອງ ແລະ ກວດກາ ສິນຄ້າ,ເຄື່ອງຂອງ ສົ່ງອອກ-ນຳເຂົ້າ ຜ່ານ ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍ ແດນປະເພນີ.**

1) ສິນຄ້າ,ເຄື່ອງຂອງ ທີ່ຈະຕ້ອງໄດ້ຮັບອະນຸຍາດນຳເຂົ້າ-ສົ່ງອອກຈາກຂະແໜງການກ່ຽວຂ້ອງ ປະກອບມີ: ຜະລິດຕະ ພັນກະສິກຳ, ແນວພັນພືດ-ສັດ, ປຸ໋ຍ, ຢາປາບສັດຕູພືດ, ອາຫານສັດ, ເຄື່ອງຮັບໃຊ້ການປະມົງ, ເຄື່ອງມື ແລະ ກົນ ຈັກຮັບໃຊ້ກະສິກຳ, ເຄື່ອງອຸປະໂພກ-ບໍລິໂພກ, ເຄື່ອງຮັບໃຊ້ຄົວເຮືອນທີ່ມີມູນຄ່າສູງ ຫຼື ມີລັກສະນະສິນຄ້າ.

ສຳລັບຜະລິດຕະພັນກະສິກຳ ເຈົ້າຂອງສິນຄ້າ,ເຄື່ອງຂອງ ຕ້ອງໄດ້ແຈ້ງລາຍການສິນຄ້າທີ່ສົ່ງອອກ-ນາເຂົ້າຕໍ່ ຂະແໜງກັກກັນພືດແລະສັດປະຈຳດ່ານດຳເນີນການກວດກາ ແລະ ຢັ້ງຢືນສຸຂານາໄມພືດແລະສັດຕາມວິຊາ ສະເພາະ; ຖ້າເປັນສິນຄ້າປະເພດອື່ນທີ່ມີມູນຄ່າສູງ ແລະ ເປັນລັກສະນະສິນຄ້າ ຕ້ອງຂໍອະນຸຍາດຈາກຂະແໜງອຸດ ສາຫະກຳ-ການຄ້າ. ຈາກນັ້ນ ຈຶ່ງດຳເນີນການແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານເພື່ອປະຕິບັດຕາມຂັ້ນຕອນທີ່ກຳນົດ ໄວ້ໃນກົດໝາຍວ່າດ້ວຍພາສີ.

2) ສິນຄ້າ,ເຄື່ອງຂອງ ທີ່ບໍ່ຈຳເປັນຂໍອະນຸຍາດຈາກຂະແໜງການກ່ຽວຂ້ອງ ປະກອບມີ: ລາຍການສິນຄ້າທີ່ກຳນົດໃນ ຂໍ້ 3 ຂອງບົດແນະນຳສະບັບນີ້, ສິນຄ້າອຸປະໂພກ-ບໍລິໂພກ, ເຄື່ອງຮັບໃຊ້ຄົວເຮືອນທີ່ມີມູນຄ່າບໍ່ເກີນ 50 (ຫ້າສິບ) ໂດລາສະຫະລັດ.

ເຈົ້າຂອງສິນຄ້າ,ເຄື່ອງຂອງ ຕ້ອງໄດ້ແຈ້ງລາຍການເຄື່ອງຂອງທີ່ສົ່ງອອກ-ນຳເຂົ້າຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ເພື່ອດຳເນີນການຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ.

6. **ສິດແລະໜ້າທີ່ຂອງເຈົ້າໜ້າທີ່ພາສີປະຈຳ ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ ແມ່ນໃຫ້ປະຕິບັດຕາມ ມາດຕາ 45 ຂອງ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 558/ນຍ, ລົງວັນທີ 31 ທັນວາ 2018.**

7. **ໜ້າທີ່ແລະຄວາມຮັບຜິດຊອບຂອງເຈົ້າຂອງສິນຄ້າ,ເຄື່ອງຂອງທີ່ສົ່ງອອກ-ນຳເຂົ້າຜ່ານ ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ.**
   - ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ປະຈຳດ່ານ ໃນການສະໜອງຂໍ້ມູນແລະແຈ້ງລາຍການສິນຄ້າ,ເຄື່ອງຂອງ ທີ່ຕົນໄດ້ສົ່ງອອກ-ນຳເຂົ້າ ຕາມລະບຽບການ.
   - ປະຕິບັດບັນດາລະບຽບການທີ່ກ່ຽວຂ້ອງກັບການສົ່ງອອກ-ນຳເຂົ້າສິນຄ້າ,ເຄື່ອງຂອງ ຜ່ານດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ ຢ່າງເຂັ້ມງວດ.
   - ຊຳລະພັນທະຄ່າພາສີ-ອາກອນແລະພັນທະອື່ນ ໃນກໍລະນີຫາກມີການສົ່ງອອກ-ນຳເຂົ້າສິນຄ້າ,ເຄື່ອງຂອງ ມີມູນຄ່າສູງ, ເປັນຈຳນວນຫຼາຍ ຫຼື ມີລັກສະນະການຄ້າ.
   - ປະຕິບັດພັນທະອື່ນທີ່ກົດໝາຍແລະລະບຽບການກ່ຽວຂ້ອງກຳນົດ.

8. **ຂໍ້ຫ້າມສຳລັບເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ແມ່ນໃຫ້ປະຕິບັດຕາມ ມາດຕາ 67 ຂອງ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 558/ນຍ, ລົງວັນທີ 31 ທັນວາ 2018.**

9. **ຂອບເຂດການນຳໃຊ້.**

ຄຳແນະນຳສະບັບນີ້ ມີຂອບເຂດການນຳໃຊ້ສຳລັບ ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ ໃນຂອບເຂດທົ່ວປະເທດ. ບັນດາມາດຕະການຈຳກັດການສົ່ງອອກ-ນຳເຂົ້າໃນຄຳແນະນຳສະບັບນີ້ ແມ່ນບໍ່ມີຜົນບັງຄັບໃຊ້ກັບ ດ່ານຊາຍແດນສາກົນ.

10. **ການຈັດຕັ້ງຜັນຂະຫຍາຍ.**

ມອບໃຫ້ ຫ້ອງການກະຊວງການເງິນ, ກົມພາສີ, ບັນດາກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ, ພະແນກການເງິນແຂວງ, ນະຄອນຫຼວງ, ບັນດາຂະແໜງການກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ຈົ່ງຮັບຊາບແລະເຜີຍແຜ່ ຄຳແນະນຳສະບັບນີ້ ໃຫ້ສັງຄົມເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

11. **ຜົນສັກສິດ.**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ບົດແນະນຳວ່າດ້ວຍການຄຸ້ມຄອງການສົ່ງອອກ-ນຳເຂົ້າສິນຄ້າ,ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ສະບັບເລກທີ 4115/ກງ, ລົງວັນທີ 12 ທັນວາ 2016.

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີກະຊວງການເງິນ**

**ສົມດີ ດວງດີ**

ບ່ອນສົ່ງ :
- ນາຍົກລັດຖະມົນຕີ,ຮອງນາຍລັດຖະມົນຕີ ທ່ານລະ 01 ສະບັບ;
- ລັດຖະມົນຕີກະຊວງອຸດສະຫະກຳການຄ້າ 01 ສະບັບ;
- ລັດຖະມົນຕີກະຊວງກະສິກຳແລະປ່າໄມ້ 01 ສະບັບ;
- ບັນດາເຈົ້າແຂວງ ແລະ ນະຄອນຫລວງ, ທ່ານລະ 01 ສະບັບ.